ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ

ເອກະສານລາຍງານການເງິນ

ປະຈຳໄຕມາດ III ປີ 2025

30 ກັນຍາ 2025

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 – 2
ບົດລາຍງານຂອງຄະນະບໍລິຫານ	3
ບົດລາຍງານການທົບທວນຄືນເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025	4 – 5
ໃບລາຍງານຖານະການເງິນປະຈຳໄຕມາດ III ປີ 2025	6 – 7
ໃບລາຍງານຜົນການດຳເນີນງານປະຈຳໄຕມາດ III ປີ 2025	8
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງປະຈຳໄຕມາດ III ປີ 2025	9
ໃບລາຍງານກະແສເງິນສົດປະຈຳໄຕມາດ III ປີ 2025	10 – 11
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025	12 – 28

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ

ປະຈຳໄຕມາດ III ປີ 2025
30 ກັນຍາ 2025
ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນບໍລິສັດ ຫຼັກຊັບ ລາວ-ຈີນ ຈຳກັດ ເປັນບໍລິສັດມະຫາຊົນທີ່ດຳເນີນທຸລະກິດພາຍໃຕ້ກົດໝາຍວ່າດ້ວຍ ວິສາຫະກິດແຫ່ງ ສປປ ລາວ ແລະ ໃບທະບຽນວິສາຫະກິດເລກທີ 0631 ອອກໂດຍ ກະຊວງ ແຜນການ ແລະ ການລົງທຶນໃນວັນທີ 21 ມິຖຸນາ 2013 ແລະ ໃບອະນຸຍາດດຳເນີນທຸລະກິດເລກທີ 010 ອອກໂດຍ ຄະນະກຳມະການ ຄຸ້ມຄອງຫຼັກຊັບແຫ່ງ ສປປ ລາວ (ຄຄຊ) ໃນວັນທີ 16 ພະຈິກ 2013 ແລະ ໃບທະບຽນວິສາຫະກິດສະບັບປັບປຸງສະບັບເລກທີ 0010/ ຈຫວ ຂອງບໍລິສັດໄດ້ອອກໃຫ້ໂດຍຄະນະຄຸ້ມຄອງເຂດເສດຖະກິດພິເສດ ໃນວັນທີ 22 ເມສາ 2025 ແລະ ໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ 06/ຄຄຊ ອອກໂດຍສຳນັກງານຄະນະກຳມະການຫຼັກຊັບລາວ (ຄຄຊ) ໃນວັນທີ 4 ກໍລະກົດ 2025. ໃນວັນທີ 17 ມິນາ 2025, ບໍລິສັດໄດ້ຮັບໃບອະນຸຍາດອອກຈຳໜ່າຍຮຸ້ນ (IPO) ອອກໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ. ຕາມທີ່ບໍລິສັດ ໄດ້ດຳເນີນການອອກຈຳໜ່າຍຮຸ້ນສາມັນໃຫ້ແກ່ມວນຊົນຄັ້ງທຳອິດສຳເລັດໂດຍມີຮຸ້ນຈຳນວນ 11,111,200 ຮຸ້ນ ໃນມູນຄ່າໜ້າບັດ 100 ກີບຕໍ່ຮຸ້ນ ແລະ ລາຄາຂາຍ 130 ກີບ/ຮຸ້ນ ທີ່ໄດ້ອອກຈຳໜ່າຍ.

ໃນວັນທີ 30 ກັນຍາ2025, ບໍລິສັດໄດ້ຮັບການສ້າງຕັ້ງຂຶ້ນໂດຍຜູ້ຖືຮຸ້ນ 4 ພາກສ່ວນ: (i) ທະນາຄານສົ່ງເສີມກະສິກຳ, (ii) ບໍລິສັດລາວອຸດ ສາຫະກຳຂໍ້ມູນຂ່າວສານ ຈຳກັດ, ເຊິ່ງສອງບໍລິສັດດັ່ງກ່າວແມ່ນສ້າງຕັ້ງຢູ່ ສປປ ລາວ ແລະ (iii) ບໍລິສັດຫຼັກຊັບ ຮຸ້ນສ່ວນປາຊີຟິກ ຈຳກັດ ແມ່ນຖືກສ້າງຕັ້ງຢູ່ສາທາລະນະລັດ ປະຊາຊົນຈີນ, (iv) ນັກລົງທຶນທົ່ວໄປ ໂດຍມີສັດສ່ວນການຖືຮຸ້ນໃນອັດຕາ 36.90%, 18%, 35.10% ແລະ 10% ຕາມລຳດັບ.

ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ທຶນຈົດທະບຽນສ້າງຕັ້ງບໍລິສັດແມ່ນ 111,111,120,000 ກີບ. ນະວັນທີ 30 ກັນຍາ 2024 ທຶນ ຈົດທະບຽນຖອກແລ້ວຂອງບໍລິສັດ ແມ່ນ 100,000,000,000 ກີບ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນການບໍລິການທີ່ປຶກສາດ້ານການເງິນ, ທີ່ປຶກສາດ້ານການລົງທຶນ ກ່ຽວກັບຫຼັກຊັບ, ນາຍໜ້າຊື້ ຂາຍຫຼັກ ຊັບ ຕາມການສັ່ງຊື້ ຫຼື ສັ່ງຂາຍຂອງຜູ້ລົງທຶນ, ຄ້າຫຼັກຊັບໃນນາມບໍລິສັດຫຼັກຊັບ, ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ແລະ ບໍລິການ ກອງທຶນສ່ວນບຸກຄົນ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ເຂດເສດຖະກິດພິເສດບຶງທາດຫຼວງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ສະພາບໍລິຫານ

ສະມາຊິກສະພາບໍລິຫານ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ກັນຍາ2025 ແລະ ນະມື້ອອກບົດລາຍງານມີດັ່ງນີ້:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ໝູໄຊ ພູມສຸວັນ	ສະພາບໍລິຫານ	ແຕ່ງຕັ້ງ ວັນທີ 10 ພຶດສະພາ 2024
ທ່ານ ລີ ຊາງເຫວີຍ	ຮອງສະພາບໍລິຫານ	ແຕ່ງຕັ້ງ ວັນທີ 22 ກັນຍາ 2017
ທ່ານ ໂຈ ຄຸນ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງ ວັນທີ 05 ພຶດສະພາ 2023
ທ່ານ ຈາງ ຫົງບິນ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງ ວັນທີ 19 ກໍລະກົດ 2013
ທ່ານ ສົມພົງ ບໍລິບຸດ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງ ວັນທີ 14 ຕຸລາ 2024
ທ່ານ ລິນ ລີ	ສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານ	ແຕ່ງຕັ້ງ ວັນທີ 14 ຕຸລາ 2024
ທ່ານ ຫວາງ ເວີຍ	ສະມາຊິກອິດສະລະ	ແຕ່ງຕັ້ງ ວັນທີ 19 ກໍລະກົດ 2013
ທ່ານ ຮສ. ປອ. ປິຍະ ວົງພິດ	ສະມາຊິກອິດສະລະ	ແຕ່ງຕັ້ງ ວັນທີ 23 ພຶດສະພາ 2023
ທ່ານ ນະ ຈັນຕະລີວົງ	ສະມາຊິກອິດສະລະ	ແຕ່ງຕັ້ງ ວັນທີ 14 ຕຸລາ 2024

ຄະນະບໍລິຫານ

ສະມາຊິກຄະນະບໍລິຫານ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ກັນຍາ2025 ແລະ ນະມື້ອອກບົດລາຍງານມີດັ່ງນີ້:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ລິນ ລີ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 19 ກໍລະກົດ 2013
ທ່ານ ປອ ສຸດທິເດດ ບຸນລືໄຊ	ຮອງຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 25 ກຸມພາ 2020
ທ່ານ ພົງສະຫວັດ ລືນາມ	ຮອງຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 14 ຕຸລາ 2024

ຕົວແທນດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງບໍລິສັດ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ກັນຍາ2025 ແລະ ນະມື້ອອກບົດລາຍງານ ສະບັບນີ້ແມ່ນ ທ່ານ ລິນ ລີ, ຜູ້ອຳນວຍການໃຫຍ່.s

ຜູ້ກວດສອບບັນຊີ

ຜູ້ກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອິນແອນຢັ ງ ລາວ ຈຳກັດ.

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ

ປະຈຳໄຕມາດ III ປີ 2025
30 ກັນຍາ 2025
ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານ ຂອງ ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ ("ບໍລິສັດ") ຂໍນຳສະເໜີບົດລາຍງານຂອງຕົນເອງ ແລະ ເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025 ຂອງບໍລິສັດ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ກັນຍາ2025.

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ກັບເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025

ຄະນະບໍລິຫານຂອງບໍລິສັດມີໜ້າທີ່ຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025 ໂດຍສອດຄ່ອງກັບນະໂຍບາຍການບັນຊີ ຕາມທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025 . ບັນດານະໂຍບາຍການບັນຊີເຫຼົ່ານີ້ ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີໃບລາຍງານຖານະການເງິນປະຈຳໄຕມາດ III ປີ 2025 , ຜົນການດຳເນີນງານປະຈຳໄຕມາດ ///ປີ 2025 ແລະ ກະແສເງິນສົດປະຈຳໄຕມາດ ///ປີ 2025 ຂອງບໍລິສັດ ໂດຍສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ. ໃນຂັ້ນຕອນການກະກຽມບົດລາຍງານການເງິນປະຈຳໄຕມາດ III ປີ 2025 , ຄະນະບໍລິຫານຄວນປະຕິບັດດັ່ງນີ້:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າບັນດາມາດຕະຖານບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກໆການປະຕິບັດທີ່ບໍ່ສອດຄ່ອງກັບມາດຕະຖານການບັນຊີ ຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025 ; ແລະ
- ກະກຽມເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025 ບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າ ບໍລິສັດ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານຂອງບໍລິສັດຕ້ອງຮັບປະກັນວ່າ ບັນດາຂໍ້ມູນທາງການບັນຊີທີ່ໄດ້ບັນທຶກໄວ້ນັ້ນ ໄດ້ເປີດເຜີຍດ້ວຍເຫດຜົນທີ່ຖືກຕ້ອງ ຕະຫຼອດມາ, ຖານະທາງການເງິນປະຈຳໄຕມາດ III ປີ 2025 ຂອງບໍລິສັດ ແລະ ເພື່ອຮັບປະກັນວ່າບົດລາຍງານການເງິນປະຈຳໄຕມາດ III ປີ 2025 ແມ່ນສອດຄ່ອງກັບການບັນທຶກລະບົບບັນຊີທີ່ໄດ້ນຳໃຊ້. ບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສິນຂອງບໍລິສັດ ແລະ ຮັບປະກັນວ່າບໍລິສັດມີການຄົ້ນຫາ ແລະ ປ້ອງກັນກ່ຽວກັບຄວາມບໍ່ໂປ່ງໃສ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານໄດ້ຢັ້ງຢືນວ່າ ບໍລິສັດໄດ້ປະຕິບັດຕາມເງື່ອນໄຂຂ້າງເທິງໃນການກະກຽມເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025 .

ຄຳຖະແຫຼງການຂອງຄະນະບໍລິຫານ

ຄະນະບໍລິຫານຂອງບໍລິສັດມີຄວາມຍິນດີຖະແຫຼງວ່າ, ໃນຄຳເຫັນຂອງບໍລິສັດ, ເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025 ໄດ້ຖືກກະກຽມໂດຍອີງຕາມນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025 .

ໃນນາມຂອງຄະນະບໍລິຫານ:

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ

ປະຈຳໄຕມາດ III ປີ 2025

30 ກັນຍາ 2025

ບົດລາຍງານຂອງຄະນະບໍລິຫານ



_____

ທ່ານ ລິນ ລີ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

30 ກັນຍາ 2025

ບົດລາຍງານການທົບທວນຄືນເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025

ຮຽນ: ເຈົ້າຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນເອກະສານລາຍງານຖານະການເງິນປະຈຳໄຕມາດ III ປີ 2025 ຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ("ບໍລິສັດ") ໃນວັນທີ 30 ກັນຍາ2025 ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນປະຈຳໄຕມາດ III ປີ 2025 ນະ ວັນທີ 30 ກັນຍາ2025, ແລະ ໃບລາຍງານຜົນການດຳເນີນງານປະຈຳໄຕມາດ III ປີ 2025 , ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ປະຈຳໄຕມາດ III ປີ 2025 ແລະ ໃບລາຍງານກະແສເງິນສົດປະຈຳໄຕມາດ III ປີ 2025 ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ ດັ່ງກ່າວ ແລະ ບົດສະຫຼຸບຂອງນັບດານະໂຍບາຍການບັນຊີທີ່ສຳຄັນ ແລະ ບົດອະທິບາຍເລກທີຕ່າງໆ ຕາມທີ່ລະບຸໄວ້ໃນໜ້າທີ 6 ຫາ ໜ້າ ທີ 28. ໃນຄວາມຄິດເຫັນຂອງພວກຂ້າພະເຈົ້າ, ຄະນະບໍລິຫານ ຂອງບໍລິສັດ ແມ່ນມີຄວາມຮັບຜິດຊອບໃນການກະກຽມຂໍ້ມູນທາງການ ໂດຍສອດຄ່ອງກັບນະໂຍບາຍທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 3 ໃນເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025 . ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າແມ່ນເພື່ອສະແດງຂໍ້ສະຫຼຸບກ່ຽວກັບຂໍ້ມູນທາງດ້ານການເງິນນີ້ໂດຍອີງໃສ່ການທົບທວນຄືນ ຂອງພວກເຮົາ.

ຂອບເຂດຂອງການທົບທວນ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນ ໂດຍສອດຄ່ອງກັບມາດຕະຖານສາກົນວ່າດ້ວຍການບໍລິການທົບທວນຄືນເລກທີ 2410, "ການທົບທວນຄືນຂໍ້ມູນທາງການເງິນປະຈຳໄຕມາດ ///ປີ 2025 ໄດ້ປະຕິບັດໂດຍນັກກວດສອບອິດສະຫຼະຂອງບໍລິສັດ". ການທົບ ທວນຄືນຂອງເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025 ປະກອບດ້ວຍການສອບຖາມປະຕິບັດການເບື້ອງຕົ້ນກັບບຸກຄົນ ທີ່ຮັບຜິດຊອບກ່ຽວກັບການເງິນ ແລະ ການບັນຊີທີ່ສຳຄັນ, ແລະ ນຳໃຊ້ຂັ້ນຕອນການວິເຄາະ ແລະ ວິທີການທົບທວນຄືນອື່ນໆ. ການ ທົບທວນຄືນນີ້ມີຂອບເຂດໜ້ອຍກວ່າການດຳເນີນການກວດສອບທີ່ອີງຕາມມາດຕະຖານສາກົນດ້ານການກວດສອບ ແລະ ດ້ວຍເຫດນີ້, ພວກຂ້າພະເຈົ້າບໍ່ສາມາດຮັບປະກັນໄດ້ວ່າຈະພົບເຫັນບັນຫາທີ່ສຳຄັນທັງໝົດຄືກັນກັບການດຳເນີນການກວດສອບ. ດັ່ງນັ້ນ, ພວກ ຂ້າພະເຈົ້າຈຶ່ງບໍ່ໄດ້ອອກຄຳເຫັນຕໍ່ກັບບັນຫາດັ່ງກ່າວ.

ການສະຫຼຸບ

ອີງຕາມການທົບທວນຄືນຂອງພວກຂ້າພະເຈົ້າ, ພົບວ່າບໍ່ມີສິ່ງໃດທີ່ຈະເປັນຂໍ້ບົ່ງຊີ້ໃຫ້ພວກຂ້າພະເຈົ້າເຊື່ອວ່າ ເອກະສານລາຍງານການ ເງິນປະຈຳໄຕມາດ III ປີ 2025 ຂອງບໍລິສັດ ບໍ່ໄດ້ຖືກກະກຽມຢ່າງຖືກຕ້ອງສອດຄ່ອງຕາມນະໂຍບາຍການບັນຊີ ທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍເລກທີ 3 ໃນເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025 .

ບັນຫາທີ່ຄວນເອົາໃຈໃສ່

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025 , ທີ່ໄດ້ອະທິບາຍນະໂຍບາຍບັນຊີທີ່ໄດ້ຖືກນຳໃຊ້ໂດຍບໍລິສັດ. ບັນດານະໂຍບາຍການບັນຊີເຫຼົ່ານີ້ ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີເອກະສານລາຍການຖານະທາງການເງິນປະຈຳໄຕມາດ ///ປີ 2025 , ຜົນການດຳເນີນງານປະຈຳໄຕມາດ ///ປີ 2025 ແລະ ກະແສເງິນສົດປະຈຳໄຕມາດ ///ປີ 2025 ຂອງບໍລິສັດ ໂດຍສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ການສະຫຼຸບຂອງພວກຂ້າພະເຈົ້າ ແມ່ນບໍ່ໄດ້ມີເງື່ອນໄຂຕໍ່ກັບບັນຫາດັ່ງກ່າວ.

ໃນນາມ ແລະ ຕາງໜ້າ ບໍລິສັດ ເອີນ ແອນ ຢັ໋ງ ລາວ ຈຳກັດ

ທ່ານ ວັນ ເລ
ຮຸ້ນສ່ວນ

ໃບອະນຸຍາດດຳເນີນການກວດສອບ
ເລກທີ 018/LCPAA APT-29

ນະຄອນຫຼວງວຽງຈັນ, ສປປ ລາວ

30 ກັນຍາ 2025

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ

ໃບລາຍງານຖານະການເງິນປະຈຳໄຕມາດ III ປີ 2025

ນະວັນທີ 30 ກັນຍາ 2025

ສະກຸນເງິນ: ກີບ

ຊັບສິນ	*ບົດອະທິບາຍ ເລກທີ*	*30 ກັນຍາ 2025*	*30 ກັນຍາ 2024*
A. ຊັບສິນໝຸນວຽນ		**127,962,490,040**	**71,466,398,822**
I. ເງິນສົດ	***4***	**55,826,089,224**	**5,789,133,108**
1. ເງິນສົດໃນຄັງ		132,544,571	-
2. ເງິນຝາກຢູ່ທະນາຄານ		32,156,148,755	1,592,743,476
3. ເງິນຝາກຢູ່ກະຊວງການເງິນ		-	
4. ເງິນຝາກລູກຄ້າ		8,957,078,365	4,196,389,632
5. ເງິນຝາກພາຍໃຕ້ບັນຊີຈຳໜ່າຍຮຸ້ນສາມັນ		14,444,945,500	-
6. ເງິນບໍລິຫານສຳລັບຮັບ-ຈ່າຍພັນທະບັດລັດຖະບານ ຮ່ວມກັບ 2 ບໍລິສັດຫຼັກຊັບ		149,337,258	-
II. ໜີ້ຕ້ອງຮັບໝຸນວຽນ		**20,699,564,553**	**23,837,214,674**
1. ໜີ້ຕ້ອງຮັບການຄ້າ		25,510,098,457	20,918,894,065
2. ໜີ້ຕ້ອງຮັບອື່ນໆ		-	1,680,000,000
3. ໜີ້ຕ້ອງຮັບດອກເບ້ຍ	5	27,888,880	1,238,320,609
	6		
III. ການລົງທຶນໄລຍະສັ້ນ		**38,683,446,570**	**40,694,899,300**
1. ການລົງທຶນໃນຫຼັກຊັບ		23,183,446,570	28,421,563,300
2. ເງິນຝາກມີກຳນົດ		15,500,000,000	10,000,000,000
3. ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດ	7	-	2,273,336,000
IV. ຊັບສິນໝຸນວຽນອື່ນໆ		**7,914,966,910**	**1,145,151,740**
1. ຊັບສິນໝຸນວຽນອື່ນໆ		7,914,966,910	1,145,151,740
B. ຊັບສິນບໍ່ໝຸນວຽນ	8	**81,134,779,739**	**93,594,903,560**
	9		
I. ຊັບສິນບັດຄົງທີ		**2,371,608,659**	**2,343,726,160**
1. ຊັບສິນບັດຄົງທີ່ມີຕົວຕົນ		2,221,173,055	2,341,132,363
2. ຊັບສິນບັດຄົງທີ່ບໍ່ມີຕົວຕົນ		1,953,556	2,593,797
3. ຊັບສິນກຳລັງກໍ່ສ້າງ		148,482,048	-
	10		
II. ການລົງທຶນໄລຍະຍາວ	11	***78,763,171,080***	**91,251,177,400**
1. ເງິນຝາກມີກຳນົດໄລຍະຍາວ		-	15,000,000,000
2. ການລົງທຶນຫຼັກຊັບຖືຄອງໄວ້ເພື່ອຂາຍ	***4***	65,229,420,000	63,560,640,000
3. ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດ		13,533,751,080	12,690,537,400
ລວມຊັບສິນ		**209,097,269,780**	**165,061,302,382**

ສະກຸນເງິນ: ກີບ

ໜີ້ສິນ ແລະ ທຶນເຈົ້າຂອງ	*ບົດອະທິບາຍ ເລກທີ*	*30 ກັນຍາ 2025*	*30 ກັນຍາ 2024*
A. ໜີ້ສິນ		**54,915,856,028**	**39,781,466,697**
I. ໜີ້ສິນໝຸນວຽນ		**54,915,856,028**	**39,781,466,697**
1. ເງິນກູ້ຢືມໄລຍະສັ້ນ	12	26,246,725,366	26,248,421,223
2. ລາຍຮັບລໍຖ້າສະສາງ	13	8,635,769,765	8,635,769,765
3. ໜີ້ຕ້ອງສົ່ງໃຫ້ແກ່ລູກຄ້າ	14	9,305,774,486	4,196,389,632
4. ໜີ້ຕ້ອງສົ່ງໃຫ້ບໍລິສັກຫຼັກຊັບ		263,959,065	-
5. ໜີ້ຕ້ອງສົ່ງຝັນທະບັດໃຫ້ລູກຄ້າ		59,231,200	-
6. ໜີ້ຕ້ອງສົ່ງອື່ນໆ		10,701,452,411	332,120,467
7. ຜົນປະໂຫຍດຂອງພະນັກງານ	15	26,134,000	368,765,610
B. ທຶນເຈົ້າຂອງ		**154,181,413,752**	**125,279,835,685**
I. ທຶນ		***154,181,413,752***	***125,279,835,685***
1. ທຶນຈົດທະບຽນທີ່ຖອກແລ້ວ	16	111,111,120,000	100,000,000,000
2. ສ່ວນເພີ່ມມູນຄ່າຮຸ້ນ		2,360,038,519	-
3. ກຳໄລສະສົມ		24,049,570,172	10,206,778,619
4. ຄັງສຳຮອງຕາມລະບຽບການ		3,697,423,512	2,107,500,518
5. ຄັງສຳຮອງສ່ວນປ່ຽນແປງຂອງຫຼັກຊັບມີໄວ້ເພື່ອຂາຍ		11,936,190,000	11,938,485,000
6. ຄັງສຳຮອງຂະຫຍາຍທຸລະກິດ		1,027,071,548	1,027,071,548
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**209,097,269,780**	**165,061,302,382**

ກະກຽມໂດຍ:

ທ່ານ ນາງ ອຸເພັດ ຫລວງລາດ
ຫົວໜ້າບັນຊີ

ອະນຸມັດໂດຍ:

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ທ່ານ ລິນ ລີ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
30 ກັນຍາ 2025

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ

ບົດລາຍງານການເຄື່ອນໄຫວທຸລະກິດ
ສຳລັບໄລຍະສາມເດືອນ ຂອງໄຕມາດທີ III
ສິ້ນສຸດວັນທີ 30 ກັນຍາ 2025(ຕໍ່)

ສະກຸນເງິນ: ກີບ

ລາຍການ	*ບົດອະທິບາຍ ເລກທີ*	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດວັນທີ 30 ກັນຍາ2025	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດວັນທີ 30 ກັນຍາ2024
1. ລາຍຮັບ		**28,592,234,252**	**12,968,745,347**
ເຊິ່ງໃນນັ້ນ:			
- ລາຍຮັບຄ່ານາຍໜ້າ ແລະ ຄ່າທຳນຽມ	17	19,389,311,982	10,071,900,349
- ລາຍຮັບດອກເບ້ຍ		1,739,548,708	896,169,733
- ລາຍຮັບເງິນປັນຜົນຈາກການລົງທຶນຫຼັກຊັບ		1,975,160,320	1,274,985,500
- ກຳໄລສຸດທິຈາກການຂາຍຫຼັກຊັບລົງທຶນ		4,483,200,250	3,005,000
- ລາຍຮັບອື່ນໆໃນການດຳເນີນງານ		1,005,012,992	722,684,765
2. ລາຍຈ່າຍ		**(7,174,045,449)**	**(5,247,119,221)**
ເຊິ່ງໃນນັ້ນ:			
- ລາຍຈ່າຍນາຍໜ້າ ແລະ ຄ່າທຳນຽມ	17	(1,481,463,861)	(881,181,552)
- (ກຳໄລ/ຂາດທຶນ) ໃນມູນຄ່ายุดติทำของการลงทุนหลักทรัพย์ระยะสั้น		4,815,151,020	1,072,946,190
- ค่าใช้จ่ายบุคลากร		(7,472,857,888)	(2,854,092,688)
- ค่าเสื่อมราคาและค่าตัดจำหน่าย		(261,726,450)	(62,989,586)
- ลายจ่ายดอกเบ้ย		(125,194,500)	(128,128,500)
- ลายจ่ายอื่นๆในการดำเนินงาน	18	(2,647,953,771)	(2,393,673,084)
3. ກຳໄລກ່ອນອາກອນ		**21,418,188,802**	**7,721,626,126**
4. ລາຍຈ່າຍອາກອນກຳໄລ		-	**-**
5. ກຳໄລສຸດທິຫຼັງອາກອນ		**21,418,188,802**	**7,721,626,126**
ກຳໄລຂັ້ນພື້ນຖານຕໍ່ຮຸ້ນ		**19.28**	**7.72**

ກະກຽມໂດຍ:

ທ່ານ ນາງ ອຸເພັດ ຫຼວງລາດ
ຫົວໜ້າບັນຊີ

ອະນຸມັດໂດຍ:

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ທ່ານ ລິນ ລີ
ຜູ້ອຳນວຍການໃຫຍ່

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ

ບົດລາຍງານການເຄື່ອນໄຫວທຸລະກິດ
ສຳລັບໄລຍະສາມເດືອນ ຂອງໄຕມາດທີ III
ສິ້ນສຸດວັນທີ 30 ກັນຍາ 2025(ຕໍ່)

ນະຄອນຫຼວງວຽງຈັນ, ສປປ ລາວ

30 ກັນຍາ 2025

ສະກຸນເງິນ: ກີບ

	ທຶນຈົດທະບຽນຖອກແລ້ວ	ສ່ວນເພີ່ມມູນຄ່າຮຸ້ນ	ຄັງສຳຮອງຕາມລະບຽບການ	ຄັງຂະຫຍາຍທຸລະກິດ	ຄັງສຳຮອງສ່ວນປ່ຽນແປງຂອງຫຼັກຊັບມີໄວ້ເພື່ອຂາຍ	ກຳໄລ/(ຂາດທຶນ)	ທຶນຈົດທະບຽນຖອກແລ້ວ
ຍອດເຫຼືອນະວັນທີ 1 ມັງກອນ 2024	**100,000,000,000**	-	**975,420,695**	**1,027,071,548**	**(1,117,755,000)**	**18,060,214**	**100,902,797,457**
ກຳໄລສຸດທິສຳລັບ 2024	-	-	-	-	-	11,320,798,228	11,320,798,228
ທຶນສຳຮອງຕາມລະບຽບການ	-	-	1,132,079,823	-	-	(1,132,079,823)	-
ກຳໄລຈາກການເພີ່ມຂຶ້ນໃນມູນຄ່າຕະຫຼາດຂອງການລົງທຶນທີ່ສາມາດຂາຍໄດ້	-	-	-	-	13,056,240,000		13,056,240,000
ຍອດເຫຼືອນະວັນທີ 30 ກັນຍາ 2024	**100,000,000,000**	-	**2,107,500,518**	**1,027,071,548**	**11,938,485,000**	**10,206,778,619**	**125,279,835,685**
ຍອດເຫຼືອນະວັນທີ 1 ມັງກອນ 2025	**100,000,000,000**	**-**	**2,107,500,518**	**1,027,071,548**	**11,938,485,000**	**10,206,778,619**	**125,279,835,685**
ກຳໄລສຸດທິໃນໄລຍະ 2025	-	-	-	-	-	21,418,188,802	21,418,188,802
ຈ່າຍເງິນປັນຜົນ	-		-	-	-	(5,555,556,000)	(5,555,556,000)
ທຶນສຳຮອງເພື່ອຂະຫຍາຍທຸລະກິດ	-	-	1,589,922,994	-	-	(1,589,922,994)	-
						(429,918,255)	(429,918,255)
ຮັບໃນມູນຄ່າການລົງທຶນຫຼັກຊັບຖືຄອງໄວ້ເພື່ອຂາຍ	-	-	-	-	(2,295,000)	-	(2,295,000)
ທຶນຈົດທະບຽນທີ່ຖອກແລ້ວພາຍໃນໄລຍະ	11,111,120,000	2,360,038,519	-	-	-	-	13,471,158,519
ยอดเหลือนะวันที่ 30 กันยา2025	**111,111,120,000**	**2,360,038,519**	**3,697,423,512**	**1,027,071,548**	**11,936,190,000**	**24,049,570,172**	**154,181,413,752**

ກະກຽມໂດຍ:

ທ່ານ ນາງ ອຸເພັດ ຫລວງລາດ
ຫົວໜ້າບັນຊີ

ອະນຸມັດໂດຍ:

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ທ່ານ ລິນ ລີ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
30 ກັນຍາ 2025

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ

ໃບລາຍງານກະແສເງິນສົດ

ສຳລັບໄລຍະສາມເດືອນ ຂອງໄຕມາດທີ III

ສິ້ນສຸດວັນທີ 30 ກັນຍາ 2025(ຕໍ່)

ສະກຸນເງິນ: ກີບ

ລາຍການ	*ບົດອະທິບາຍເລກທີ*	ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ສິ້ນສຸດວັນທີ 30 ກັນຍາ 2025	ສຳລັບໄລຍະສາມເດືອນ ຂອງໄຕມາດທີ III ສິ້ນສຸດວັນທີ 30 ກັນຍາ 2025
I. ກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		***21,418,188,802***	***7,721,626,126***
ການດັດແກ້ສຳລັບ:			
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມ	8,9	261,726,450	62,989,586
ລາຍຈ່າຍດອກເບ້ຍ		125,194,500	128,128,500
ປ່ຽນແປງໃນມູນຄ່ຍຸດຕິທຳຈາກການລົງທຶນໃນຫຼັກຊັບ		4,815,151,020	1,072,946,190
ກຳໄລສຸດທິສະສາງຊັບສິນບັດຄົງທີ່		-	-
ລາຍຮັບດອກເບ້ຍ		(1,739,548,708)	(896,169,733)
ເງິນປັນຜົນຈາກການລົງທຶນໃນຫຼັກຊັບ		(1,975,160,320)	(1,274,985,500)
ການດັດແກ້ທຶນໝຸນວຽນ:			
ປ່ຽນແປງສຸດທິຂອງໜີ້ຕ້ອງຮັບ		(2,911,204,391)	(9,185,372,136)
ປ່ຽນແປງສຸດທິຂອງການລົງທຶນຫຼັກຊັບ		422,965,710	5,983,436,250
ປ່ຽນແປງສຸດທິຂອງຊັບສິນໝຸນວຽນອື່ນໆ		(6,769,815,170)	(2,598,806,592)
ປ່ຽນແປງສຸດທິຂອງໜີ້ຕ້ອງສົ່ງ		15,478,716,798	1,513,355,601
ປ່ຽນແປງສຸດທິຂອງລາຍຮັບລໍຖ້າສະສາງ	13	-	-
ປ່ຽນແປງຂອງຜົນປະໂຫຍດພະນັກງານ		(342,631,610)	(9,830,000)
ລາຍຮັບດອກເບ້ຍ		2,949,980,436	534,969,733
ອາກອນທີ່ໄດ້ຊຳລະ		-	-
ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**26,736,706,280**	**61,611,028,238**
II. ກະແສເງິນສົດຈາກກິດຈະກຳການລົງທຶນ			
ຊື້ຊັບສິນບັດຄົງທີ່	8,9	(141,126,900)	(16,274,700)
ຮັບຈາກການຂາຍຊັບສິນບັດຄົງທີ່		-	-
ລົງທຶນໃນເງິນຝາກໄລຍະຍາວ		(5,500,000,000)	(12,000,000,000)
ຮັບຈາກການໄຖ່ຖອນເງິນຝາກມີກຳນົດໄລຍະຍາວ		15,000,000,000	20,341,782,067
ຮັບຈາກການຂາຍ ຫຼັກຊັບປະເພດມີໄວ້ເພື່ອຂາຍ		(1,671,075,000)	(693,765,000)
ລົງທຶນໃນຫຼັກຊັບຖືໄວ້ຈົນຄົບກຳນົດ		1,430,122,320	(8,608,220,560)
ສ່ວນເພີ່ມມູນຄ່າຮຸ້ນ		2,360,038,519	-
ເງິນປັນຜົນຈາກການລົງທຶນໃນຫຼັກຊັບ		1,975,160,320	1,274,985,500
ຊັບສິນບັດກຳລັງກໍ່ສ້າງ		(148,482,048)	(2,047,574,971)
ກະແສເງິນສົດສຸດທິ(ນຳໃຊ້)/ຈາກກິດຈະກຳການລົງທຶນ		**13,304,637,211**	**(1,749,067,664)**

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ

ໃບລາຍງານກະແສເງິນສົດ

ສຳລັບໄລຍະສາມເດືອນ ຂອງໄຕມາດທີ III

ສິ້ນສຸດວັນທີ 30 ກັນຍາ 2025(ຕໍ່)

ສະກຸນເງິນ: ກີບ

ລາຍການ	*ບົດອະທິບາຍ ເລກທີ*	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດວັນທີ 30 ກັນຍາ2025	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດວັນທີ 30 ກັນຍາ2024
III. ກິດຈະກຳທາງການເງິນ			
ຈ່າຍເງິນປັນຜົນ		(5,555,556,000)	-
ການຊຳລະເງິນກູ້ຢືມ		(1,695,857)	(100,674,964)
ລາຍຈ່າຍດອກເບ້ຍ		(125,194,500)	(128,128,500)
ທຶນຈົດທະບຽນທີ່ຖອກແລ້ວ		11,111,120,000	-
ກະແສເງິນສົດສຸດທິນຳໃຊ້ໃນກິດຈະກຳທາງການເງິນ		**4,998,755,388**	**(228,803,464)**
ເພີ່ມຂຶ້ນສຸດທິຂອງເງິນສົດ		**50,036,956,117**	**1,074,416,898**
ເງິນສົດໃນຕົ້ນປີ		**5,789,133,108**	**4,849,890,530**
ເງິນສົດໃນທ້າຍປີ	**4**	**55,826,089,225**	**5,924,307,428**

ກະກຽມໂດຍ:

ທ່ານ ນາງ ອຸເພັດ ຫລວງລາດ
ຫົວໜ້າບັນຊີ

ອະນຸມັດໂດຍ:

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ທ່ານ ລິນ ລີ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

30 ກັນຍາ 2025

1. ຂໍ້ມູນບໍລິສັດ

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນບໍລິສັດ ຫຼັກຊັບ ລາວ-ຈີນ ຈຳກັດ ເປັນບໍລິສັດມະຫາຊົນທີ່ດຳເນີນທຸລະກິດພາຍໃຕ້ກົດໝາຍວ່າດ້ວຍ ວິສາຫະກິດແຫ່ງ ສປປ ລາວ ແລະ ໃບທະບຽນວິສາຫະກິດເລກທີ 0631 ອອກໂດຍ ກະຊວງແຜນການ ແລະ ການລົງທຶນໃນວັນທີ 21 ມິຖຸນາ 2013 ແລະ ໃບທະບຽນວິສາຫະກິດສະບັບປັບປຸງສະບັບເລກທີ 0010/ຈທວ ຂອງບໍລິສັດໄດ້ອອກໃຫ້ໂດຍຄະນະຄຸ້ມຄອງເຂດເສດຖະກິດພິເສດ ໃນວັນທີ 22 ເມສາ 2025 ແລະ ໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ 06/ຄຄຊ ອອກໂດຍສຳນັກງານຄະນະກຳມະການຫຼັກຊັບລາວ (ຄຄຊ) ໃນວັນທີ 4 ກໍລະກົດ 2025. ໃນວັນທີ 17 ມິນາ 2025, ບໍລິສັດໄດ້ຮັບໃບອະນຸຍາດອອກຈຳໜ່າຍຮຸ້ນ (IPO) ອອກໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ. ຕາມທີ່ບໍລິສັດໄດ້ດຳເນີນການອອກຈຳໜ່າຍຮຸ້ນສາມັນໃຫ້ແກ່ມວນຊົນຄັ້ງທຳອິດສຳເລັດໂດຍມີຮຸ້ນຈຳນວນ 11,111,200 ຮຸ້ນ ໃນມູນຄ່າໜ້າບັດ 100 ກີບຕໍ່ຮຸ້ນ ແລະ ລາຄາຂາຍ 130 ກີບ/ຮຸ້ນ ທີ່ໄດ້ອອກຈຳໜ່າຍ.

ໃນວັນທີ 30 ກັນຍາ2025, ບໍລິສັດໄດ້ຮັບການສ້າງຕັ້ງຂຶ້ນໂດຍຜູ້ຖືຮຸ້ນ 4 ພາກສ່ວນ: (i) ທະນາຄານສິ່ງເສີມກະສິກຳ, (ii) ບໍລິສັດລາວອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ, ເຊິ່ງສອງບໍລິສັດດັ່ງກ່າວແມ່ນສ້າງຕັ້ງຢູ່ ສປປ ລາວ ແລະ (iii) ບໍລິສັດຫຼັກຊັບ ຮຸ້ນສ່ວນປາຊີຟິກ ຈຳກັດ ແມ່ນຖືກສ້າງຕັ້ງຢູ່ສາທາລະນະລັດ ປະຊາຊົນຈີນ, (iv) ນັກລົງທຶນທົ່ວໄປ ໂດຍມີສັດສ່ວນການຖືຮຸ້ນໃນອັດຕາ 36.90%, 18%, 35.10% ແລະ 10% ຕາມລຳດັບ.

ນະວັນທີ 30 ກັນຍາ2025 ທຶນຈົດທະບຽນສ້າງຕັ້ງບໍລິສັດແມ່ນ 111,111,120,000 ກີບ. ນະວັນທີ 30 ກັນຍາ 2024 ທຶນຈົດທະບຽນຖອກແລ້ວຂອງບໍລິສັດ ແມ່ນ 100,000,000,000 ກີບ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນການໃຫ້ບໍລິການນາຍໜ້າຊື້-ຂາຍຫຼັກຊັບ, ຄ້າຫຼັກຊັບໃນນາມບໍລິສັດຫຼັກຊັບ, ທີ່ປຶກສາດ້ານການເງິນ, ບໍລິການທີ່ປຶກສາດ້ານການລົງທຶນກ່ຽວກັບຫຼັກຊັບ, ບໍລິການຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ແລະ ບໍລິການກອງທຶນສ່ວນບຸກຄົນ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ເຂດເສດຖະກິດພິເສດບຶງທາດຫຼວງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ພະນັກງານທັງໝົດຂອງບໍລິສັດນະວັນທີ 30 ກັນຍາ2025 ມີ 22 ຄົນ (30 ກັນຍາ 2024: 21 ຄົນ).

2. ພື້ນຖານໃນການກະກຽມ

ອີງຕາມກົດໝາຍການບັນຊີສະບັບເລກທີ 46/ສພຊ ລົງວັນທີ 20 ພະຈິກ 2023, ບັນດາຫົວໜ່ວຍທີ່ມີຜົນປະໂຫຍດສາທາລະນະ ລວມທັງບໍລິສັດຫຼັກຊັບຄວນນຳໃຊ້ມາດຕະຖານການລາຍງານການເງິນສາກົນ (“IFRS”) ໃນການກະກຽມເອກະສານລາຍງານການເງິນປະຈຳປີ. ອີງຕາມໜັງສືທາງລັດຖະການ ລົງວັນທີ 27 ເມສາ 2020, ບັນດາຫົວໜ່ວຍທີ່ມີຜົນປະໂຫຍດສາທາລະນະໄດ້ຮັບອະນຸຍາດໃຫ້ເລື່ອນການນຳໃຊ້ມາດຕະຖານການລາຍງານການເງິນສາກົນ ຈົນຮອດວັນທີ 1 ມັງກອນ 2026. ປັດຈຸບັນ, ຄະນະບໍລິຫານກຳລັງກະກຽມແຜນການປະຕິບັດ IFRS ໃຫ້ສອດຄ່ອງກັບເອກະສານແຈ້ງການ.

ນະວັນທີ 30 ກັນຍາ 2024, ອັດຕາເງິນເຟີ້ສະສົມຂອງ ສປປ ລາວ ໃນໄລຍະ 36 ເດືອນທີ່ຜ່ານມາສູງກວ່າ 100%, ເຊິ່ງຈັດຢູ່ໃນກຸ່ມປະເທດທີ່ເສດຖະກິດມີພາວະອັດຕາເງິນເຟີ້ລະດັບສູງສຸດ ອີງຕາມການລາຍງານຈາກເວັບໄຊ້ຂອງທະນາຄານແຫ່ງ ສປປ ລາວ (www.bol.gov.la.com). ນະວັນທີ 30 ກັນຍາ2025, ອັດຕາເງິນເຟີ້ທີ່ສະສົມມາຂອງ ສປປ ລາວ ໃນໄລຍະ 36 ເດືອນທີ່ຜ່ານແມ່ນຫຼຸດລົງ 74%. ເຖິງຢ່າງໃດກໍຕາມ, ເພື່ອກຳນົດວ່າສະກຸນເງິນໃດຈະຢຸດຮັບຮູ້ເປັນພາວະເງິນເຟີ້ລະດັບສູງສຸດນັ້ນຈຳເປັນຕ້ອງມີການແນວໂນ້ມ ແລະ ການທົບທວນຄືນໃນທ້າຍປີ 2025. ດັ່ງນັ້ນ, ບໍລິສັດຈຶ່ງຍັງບໍ່ທັນປະຕິບັດນະໂຍບາຍການບັນຊີໃດໆ ຕໍ່ກັບຜົນກະທົບຈາກພາວະອັດຕາເງິນເຟີ້ລະດັບສູງສຸດ ເນື່ອງຈາກຍັງບໍ່ມີຄຳແນະນຳສະເພາະສຳລັບມາດຕະຖານການລາຍງານການເງິນສາກົນ ແລະ ກະຊວງການເງິນ ຕໍ່ກັບບັນຫາດັ່ງກ່າວ.

ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ກັນຍາ2025, ເອກະສານລາຍງານການເງິນຂອງບໍລິສັດໄດ້ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີ ຕາມທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025 . ເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025 ແມ່ນໄດ້ຖືກລາຍງານເປັນສະກຸນເງິນລາວກີບ (“ກີບ”) ເຊິ່ງແມ່ນສະກຸນເງິນຫຼັກໃນການເຮັດທຸລະກຳ ແລະ ຊຳລະສະສາງຂອງບໍລິສັດ.

ທີ່ມາພ້ອມກັບໃບລາຍງານຖານະການເງິນ, ໃບລາຍງານຜົນການດຳເນີນງານ, ໃບລາຍງານກະແສເງິນສົດ ແລະ ການນຳໃຊ້ບໍ່ໄດ້ຖືກກຳນົດສຳລັບຜູ້ທີ່ບໍ່ໄດ້ແຈ້ງກ່ຽວກັບຫຼັກການບັນຊີ, ຂັ້ນຕອນ ແລະ ການດຳເນີນງານທີ່ອະທິບາຍຂ້າງລຸ່ມນີ້ ແລະ ນອກຈາກນັ້ນບໍ່ໄດ້ມີຈຸດປະສົງເພື່ອນຳສະເໜີຖານະການເງິນ ແລະ ຜົນປະກອບການ ແລະ ກະແສເງິນສົດຂອງບໍລິສັດໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ເອກະສານລາຍງານການເງິນແມ່ນຖືກກະກຽມເພື່ອໃຫ້ບໍລິສັດປະຕິບັດຕາມຂໍ້ກຳນົດໃນການລາຍງານໃຫ້ຜູ້ຖືຮຸ້ນຂອງບໍລິສັດ. ດ້ວຍເຫດຜົນດັ່ງກ່າວ, ເອກະສານລາຍງານການເງິນສະບັບນີ້ອາດບໍ່ເໝາະສົມແກ່ການນຳໃຊ້ເພື່ອຈຸດປະສົງອື່ນໆ ແລະ ຈະບໍ່ຖືກເປີດເຜີຍແກ່ ຫຼື ນຳໃຊ້ໂດຍພາກສ່ວນອື່ນ.

ປີການບັນຊີ

ປີການບັນຊີຂອງບໍລິສັດ ແມ່ນເລີ່ມແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 30 ກັນຍາ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

ນະໂຍບາຍການບັນຊີທີ່ບໍລິສັດໄດ້ນຳໃຊ້ໃນການກະກຽມເອກະສານລາຍງານການເງິນປະຈຳໄຕມາດ **III** ປີ 2025 ເຫຼົ່ານີ້ ແມ່ນສອດຄ່ອງກັບການນຳໃຊ້ໃນການກະກຽມເອກະສານລາຍງານການເງິນປະຈຳໄຕມາດ **III** ປີ 2025 ຂອງບໍລິສັດສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ກັນຍາ2024.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.1. ເງິນສົດ

ເງິນສົດປະກອບມີ ເງິນສົດໃນຄັງ ແລະ ເງິນຝາກຢູ່ທະນາຄານ, ລວມທັງເງິນຝາກຂອງລູກຄ້າ.

ເງິນສົດໃນຄັງ ແລະ ເງິນຝາກຢູ່ທະນາຄານ ແມ່ນມີສະພາບຄ່ອງສູງ ແລະ ຖືການຳໃຊ້ເຂົ້າໃນການຄຸ້ມຄອງຄຳໝັ້ນສັນຍາໄລຍະສັ້ນ.

ເງິນຝາກຂອງລູກຄ້າປະກອບມີ ເງິນຝາກຂອງຜູ້ລົງທຶນໃນທຸລະກຳການຊື້ຂາຍຫຼັກຊັບ. ບໍລິສັດຍັງໄດ້ຮັບຮູ້ມູນຄ່າທີ່ຊຳລະໃຫ້ແກ່ລູກຄ້າເປັນໜີ້ຕ້ອງສົ່ງໃຫ້ແກ່ລູກຄ້າ.

3.2. ຊັບສິນບັດຄົງທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ

ຊັບສິນບັດຄົງທີ່ມີຕົວຕົນ ປະກອບດ້ວຍສິ່ງຕິດຕັ້ງ, ການປັບປຸງ ແລະ ການຕົບແຕ່ງ, ເຄື່ອງໃຊ້ຫ້ອງການ ແລະ ເຟີນີເຈີ ແລະ ພາຫະນະ. ຊັບສິນບັດທີ່ບໍ່ມີຕົວຕົນປະກອບດ້ວຍລາຍຈ່າຍກ່ອນການສ້າງຕັ້ງ ແລະ ຊ໋ອບແວ. ຊັບສິນບັດຄົງທີ່ທີ່ສະແດງຕາມມູນຄ່າຕົ້ນທຶນຊື້ລົບໃຫ້ຄ່າຫຼ້ຽຫ້ຽນສະສົມ, ຖ້າມີ.

ຕົ້ນທຶນຂອງຊັບສິນປະກອບມີ ລາຄາຊື້ ບວກໃຫ້ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງໂດຍກົງໃນການປ່ຽນສະພາບຂອງຊັບສິນໃຫ້ຢູ່ໃນສະພາບພ້ອມສຳລັບການນຳໃຊ້.

ຄ່າໃຊ້ຈ່າຍທີ່ຕິດພັນກັບການຊື້ເພີ່ມ, ການປັບປຸງ ແລະ ການປ່ຽນສະພາບຊັບສິນເພື່ອນຳໃຊ້ຄືນໃໝ່ ຈະຖືກຮັບຮູ້ເປັນຕົ້ນທຶນ ແລະ ລາຍຈ່າຍສຳລັບການບຳລຸງຮັກສາ ແລະ ສ້ອມແປງຈະຖືກບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານ, ຖ້າມີ.

ເມື່ອຊັບສິນຖືກຂາຍ ຫຼື ສະສາງອອກ, ມູນຄ່າຕົ້ນທຶນ ແລະ ຄ່າຫຼ້ຽຫ້ຽນສະສົມຈະຖືກຕັດອອກຈາກໃບສະຫຼຸບຊັບສິນບັດຂອງເອກະສານລາຍງານຖານະການເງິນ ແລະ ກຳໄລ ຫຼື ຂາດທຶນຈາກການສະສາງຕ່າງໆຈະຖືກສະແດງໃນໃບລາຍງານຜົນການດຳເນີນງານປະຈຳໄຕມາດ III ປີ 2025 .

3.3. ຄ່າຫຼ້ຽຫ້ຽນ ແລະ ຄ່າເສື່ອມ

ຄ່າຫຼ້ຽຫ້ຽນຂອງຊັບສິນບັດຄົງທີ່ ແມ່ນຄິດໄລ່ຕາມວິທີຫັກຄ່າຫຼ້ຽຫ້ຽນແບບສະໝ່ຳສະເໝີ ຕາມອັດຕາທີ່ໄດ້ກຳນົດຕາມອາຍຸການນຳໃຊ້ທີ່ປະເມີນໄວ້ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍລາຍໄດ້ເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019 ຮັບຮອງໂດຍສະພາແຫ່ງຊາດ. ດ້ານລຸ່ມນີ້ແມ່ນອັດຕາປະຈຳປີທີ່ໄດ້ນຳໃຊ້:

ການປັບປຸງ ແລະ ການຕົບແຕ່ງ	10%
ເຄື່ອງໃຊ້ຫ້ອງການ ແລະ ເຟີນີເຈີ	20%
ພາຫະນະ	20%
ຊ໋ອບແວ	50%

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.4. ຊັບສິນກຳລັງກໍ່ສ້າງ

ຊັບສິນກຳລັງກໍ່ສ້າງ ໝາຍເຖິງຕົ້ນທຶນໃນການຊື້ຊັບສິນເຂົ້າມາໃໝ່ໂດຍທີ່ຍັງບໍ່ໄດ້ສຳເລັດການຕິດຕັ້ງ ຫຼື ຍັງບໍ່ໄດ້ສຳເລັດການກໍ່ສ້າງ. ຊັບສິນກຳລັງກໍ່ສ້າງຈະຖືກລະບຸໄວ້ເປັນຕົ້ນທຶນ, ເຊິ່ງລວມເຖິງຕົ້ນທຶນທັງໝົດທີ່ຈຳເປັນໃນການກໍ່ສ້າງ, ສ້ອມແປງ, ຕົບແຕ່ງ, ຂະຫຍາຍ ຫຼື ປັບປຸງໂຄງສ້າງດ້ວຍເຕັກໂນໂລຊີ, ລວມມີ ຕົ້ນທຶນການກໍ່ສ້າງ, ຄ່າເຄື່ອງມື ແລະ ອຸປະກອນ, ຄ່າໃຊ້ຈ່າຍການຄຸ້ມຄອງໂຄງການ, ຄ່າທີ່ປຶກສາການກໍ່ສ້າງ, ແລະ ຕົ້ນທຶນການກູ້ຢືມທີ່ເຂົ້າເງື່ອນໄຂໃນການປັນທຶກເປັນຊັບສິນ.

ຊັບສິນກຳລັງກໍ່ສ້າງ ຈະຖືກໂອນເປັນຊັບສິນ ກໍຕໍ່ເມື່ອຊັບສິນເຫຼົ່ານີ້ຕິດຕັ້ງສຳເລັດ ຫຼື ເມື່ອໂຄງການກໍ່ສ້າງສຳເລັດສົມບູນ. ການຄິດໄລ່ຄ່າຫຼ້ຍຫ້ຽນ ຈະເລີ່ມຫັກຄ່າຫຼ້ຍຫ້ຽນ ນັບຕັ້ງແຕ່ຊັບສິນເຫຼົ່ານີ້ໄດ້ເລີ່ມໃຊ້ງານ.

ຄ່າໃຊ້ຈ່າຍການກໍ່ສ້າງ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍ ເມື່ອຄ່າໃຊ້ຈ່າຍນັ້ນບໍ່ເຂົ້າເງື່ອນໄຂໃນການຮັບຮູ້ເປັນຊັບສິນ.

3.5. ທຸລະກຳເງິນຕາຕ່າງປະເທດ

ບັນດາທຸລະກຳທີ່ເປັນສະກຸນເງິນຕາຕ່າງປະເທດ ເຊິ່ງບໍ່ແມ່ນສະກຸນເງິນທີ່ບໍລິສັດໃຊ້ໃນການລາຍງານ (“ກີບ”) ແມ່ນຖືກບັນທຶກໂດຍແປງຄ່າຕາມອັດຕາແລກປ່ຽນນະມື້ທີ່ທຸລະກຳເກີດຂຶ້ນ. ນະທ້າຍປີ, ຊັບສິນ ແລະ ໜີ້ສິນທາງການເງິນທີ່ບັນທຶກເປັນເງິນຕາຕ່າງປະເທດ ແມ່ນຈະຖືກຕີມູນຄ່າຕາມອັດຕາແລກປ່ຽນນະມື້ອອກເອກະສານລາຍງານການເງິນ. ທຸກສ່ວນຜິດດ່ຽງຈາກອັດຕາແລກປ່ຽນ ແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ.

3.6. ໜີ້ຕ້ອງຮັບທາງການຄ້າ

ໜີ້ຕ້ອງຮັບທາງການຄ້າຈະຖືກບັນທຶກ ນະຕົ້ນທຶນ. ເງິນແຮສຳລັບຄ່າເສື່ອມຂອງໜີ້ຕ້ອງຮັບທາງການຄ້າຈະຖືກສ້າງຂຶ້ນເມື່ອມີຫຼັກຖານຢັ້ງຢືນວ່າ ບໍລິສັດຈະບໍ່ສາມາດເກັບໜີ້ໄດ້ໃນຈຳນວນທີ່ລູກຄ້າເປັນໜີ້ທັງໝົດ. ມູນຄ່າຂອງເງິນແຮ ແມ່ນສ່ວນຕ່າງລະຫວ່າງຍອດຍົກມາ ແລະ ມູນຄ່າໜີ້ຕ້ອງຮັບທາງການຄ້າທີ່ສາມາດເກັບຄືນໄດ້. ມູນຄ່າດັ່ງກ່າວນີ້ຈະເປັນມູນຄ່າຈາກການຄາດຄະເນທີ່ດີທີ່ສຸດ ຂອງຄະນະບໍລິຫານບໍລິສັດທີ່ຄາດວ່າຈະສາມາດເກັບໜີ້ໄດ້.

3.7. ຫຼັກຊັບຖືຄອງໄວ້ເພື່ອຄ້າ

ຫຼັກຊັບຖືຄອງໄວ້ເພື່ອຄ້າສ່ວນໃຫຍ່ ແມ່ນການລົງທຶນໃນຮຸ້ນຈົດທະບຽນ. ການລົງທຶນໃນຮຸ້ນຈົດທະບຽນທັງໝົດໃນເບື້ອງຕົ້ນ ແມ່ນຖືກຮັບຮູ້ຕາມມູນຄ່າຕົ້ນທຶນ ແລະ ຖືກລາຍງານຕາມລາຄາຕະຫຼາດໃນຕໍ່ມາ. ສ່ວນປ່ຽນແປງຕາມລາຄາຕະຫຼາດຂອງຮຸ້ນ ແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານປະຈຳໄຕມາດ III ປີ 2025 .

3.8. ຫຼັກຊັບຖືຄອງໄວ້ເພື່ອຂາຍ

ການລົງທຶນໃນຫຼັກຊັບຖືຄອງໄວ້ເພື່ອຂາຍປະກອບມີ ຫຼັກຊັບທຶນ ເຊິ່ງບໍ່ໄດ້ຖືກຈັດເປັນປະເພດ ຫຼື ກຳນົດໃຫ້ຖືໄວ້ເພື່ອການຄ້າ.

ຫຼັງຈາກການຕີມູນຄ່າໃນເບື້ອງຕົ້ນ, ການລົງທຶນທາງການເງິນມີໄວ້ເພື່ອຂາຍ ໄດ້ຖືກຕີມູນຄ່າຕາມມູນຄ່າຍຸດຕິທຳ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.8. ຫຼັກຊັບຖືຄອງໄວ້ເພື່ອຂາຍ (ຕໍ່)

ກຳໄລ ແລະ ຂາດທຶນທີ່ບໍ່ເກີດຂຶ້ນຈິງ ແມ່ນຖືກຮັບຮູ້ໂດຍກົງໃນປະເພດຂອງທຶນໃນຄັງສຳຮອງຫຼັກຊັບຖືຄອງໄວ້ເພື່ອຂາຍ. ເມື່ອການລົງທຶນດັ່ງກ່າວໝົດກຳນົດ, ກຳໄລ ຫຼື ຂາດທຶນສະສົມກ່ອນໜ້ານີ້ ຈະຖືກຮັບຮູ້ໃນສຳຮອງຫຼັກຊັບຖືຄອງໄວ້ເພື່ອຂາຍ ເຊິ່ງໄດ້ຖືກປັບປ່ຽນໃຫ້ເປັນກຳໄລ ຫຼື ຂາດທຶນສະສົມ. ເງິນປັນຜົນທີ່ໄດ້ຮັບຈາກການລົງທຶນໃນຫຼັກຊັບຖືຄອງໄວ້ເພື່ອຂາຍ ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານວ່າເປັນ 'ລາຍຮັບເງິນປັນຜົນຈາກການລົງທຶນໃນຫຼັກຊັບ' ເມື່ອໄດ້ມີການກຳນົດສິດໃນການຊຳລະ.

3.9. ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດ

ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດລວມມີ ກາສານໜີ້ ເຊິ່ງຖືຄອງໃນຮູບແບບທຸລະກິດທີ່ມີວັດຖຸປະສົງໃນການຖືຄອງຊັບສິນ ເພື່ອລວບລວມກະແສເງິນສົດຕາມສັນຍາ.

ກາສານໜີ້ທັງໝົດແມ່ນ ຖືກຕີມູນຄ່າໃນເບື້ອງຕົ້ນດ້ວຍມູນຄ່າຍຸດຕິທຳບວກຕົ້ນທຶນທາງກົງໃນການເຮັດທຸລະກຳທີ່ເພີ່ມຂຶ້ນ, ແລະ ຕໍ່ມາດ້ວຍການຫັກຄ່າເສື່ອມຕົ້ນທຶນ ໂດຍໃຊ້ວິທີດອກເບ້ຍທີ່ແທ້ຈິງ. ດອກເບ້ຍທີ່ໄດ້ຮັບໃນຂະນະທີ່ຖືຄອງການລົງທຶນຈົນຄົບກຳນົດຈະຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບເປັນ "ລາຍຮັບດອກເບ້ຍ" ບົນພື້ນຖານຄ້າງຮັບ (ຄຳນຶງເຖິງຜົນຕອບແທນທີ່ແທ້ຈິງຂອງຊັບສິນ) ເວັ້ນເສຍແຕ່ການເກັບລວບລວມແມ່ນມີຄວາມໜ້າສົງໃສ.

3.10. ການຮັບຮູ້ລາຍຮັບ

(i) ລາຍຮັບຈາກ ຄ່ານາຍໜ້າ ແລະ ຄ່າທຳນຽມ

(ກ) ລາຍຮັບຈາກການສະໜອງບໍລິການດ້ານນາຍໜ້າ ແມ່ນໄດ້ຖືກຮັບຮູ້ໃນວັນທີ່ມີທຸລະກຳເກີດຂຶ້ນ;

(ຂ) ລາຍຮັບດ້ານການໃຫ້ຄຳປຶກສາ ແລະ ຄຳແນະນຳ ແມ່ນໄດ້ຖືກຮັບຮູ້ເມື່ອທຸລະກຳທີ່ກ່ຽວຂ້ອງໄດ້ເກີດຂຶ້ນ ຫຼື ການບໍລິການ ທີ່ຕິດພັນມີຄວາມຮຽກຮ້ອງຕ້ອງການ;

(ຄ) ຄ່າທຳນຽມການຄ້ຳປະກັນໄດ້ຖືກຮັບຮູ້ເປັນລາຍຮັບເມື່ອໄດ້ແຈ້ງສິດທີ່ຈະໄດ້ຮັບການຊຳລະເງິນ ອີງຕາມເງື່ອນໄຂຂອງຂໍ້ກຳນົດ ແລະ/ຫຼື ການຕົກລົງການຄ້ຳປະກັນ.

(ii) ລາຍຮັບດອກເບ້ຍຈາກເງິນຝາກມີກຳນົດ

ລາຍຮັບດອກເບ້ຍຈາກເງິນຝາກມີກຳນົດ ແມ່ນຖືກຮັບຮູ້ໃນພື້ນຖານຄ້າງຮັບ ໂດຍຄຳນຶງເຖິງຜົນຕອບແທນຂອງຊັບສິນ ເວັ້ນເສຍແຕ່ການເກັບລວບລວມ ແມ່ນມີຄວາມໜ້າສົງໃສ.

(iii) ລາຍຮັບເງິນປັນຜົນຈາກການລົງທຶນໃນຫຼັກຊັບ

ລາຍຮັບເງິນປັນຜົນຈາກການລົງທຶນໃນຫຼັກຊັບຖືກຮັບຮູ້ ເມື່ອມີສິດທີ່ຈະໄດ້ຮັບຈາກການຊຳລະຂອງບໍລິສັດເກີດຂຶ້ນ ຍົກເວັ້ນເມື່ອ ຄວາມບໍ່ແນ່ນອນໃນການເກັບຄືນລາຍຮັບທີ່ຖືກຮັບຮູ້ໃນກໍລະນີດັ່ງກ່າວ, ລາຍຮັບເງິນປັນຜົນໄດ້ຖືກຮັບຮູ້ຍົນພື້ນຖານເງິນສົດ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

3.11. ອາກອນກຳໄລ

ການຄິດໄລ່ເງິນແຮສຳລັບເສຍອາກອນກຳໄລຂອງປີປັດຈຸບັນ, ແມ່ນອີງຕາມກົດໝາຍສ່ວຍສາອາກອນທີ່ນຳໃຊ້ໃນ ສປປ ລາວ. ບໍລິສັດມີພັນທະຈ່າຍອາກອນໃນອັດຕາ 20% ຂອງກຳໄລກ່ອນອາກອນ ໂດຍອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນສະບັບປັບປຸງເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ໃນວັນທີ ຫຼື ຫຼັງວັນທີ 1 ມັງກອນ 2020. ການແຈ້ງອາກອນຂອງບໍລິສັດຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

3.12. ຄັງສຳຮອງ

ຄັງສຳຮອງຕາມລະບຽບການ

ອີງຕາມມາດຕາ 154, ກົດໝາຍ ວ່າດ້ວຍວິສາຫະກິດ ລົງວັນທີ 29 ທັນວາ 2022, ບໍລິສັດ ຈຳເປັນຕ້ອງໄດ້ຫັກ 10% ຂອງ ກຳໄລຫຼັງອາກອນໃນແຕ່ລະປີ, ຫຼັງຈາກຫັກຂາດທຶນສະສົມ (ຖ້າມີ) ເຂົ້າໃນຄັງສຳຮອງຕາມລະບຽບການ. ເມື່ອຄັງສຳຮອງນີ້ສະສົມເຖິງ 50% ຂອງທຶນຈົດທະບຽນ, ບໍລິສັດອາດຈະໂຈະການຫັກດັ່ງກ່າວ, ເວັ້ນເສຍແຕ່ໄດ້ລະບຸໄວ້ໃນລະບຽບຂໍ້ບັງຄັບຂອງ ບໍລິສັດ. ຄັງສຳຮອງນີ້ຈະຖືກນຳໃຊ້ເຂົ້າໃນການເກັບຄືນຈາກການຂາດທຶນຂອງບໍລິສັດ, ເວັ້ນເສຍແຕ່ກົດໝາຍສະບັບອື່ນໄດ້ ກຳນົດໄວ້.

ຄັງສຳຮອງຂະຫຍາຍທຸລະກິດ

ຄັງສຳຮອງຂະຫຍາຍທຸລະກິດແມ່ນຖືກສ້າງຂຶ້ນໃນແຕ່ລະປີອີງຕາມການຕັດສິນໃຈຂອງຄະນະບໍລິຫານ.

3.13. ກຳໄລຂັ້ນພື້ນຖານຕໍ່ຮຸ້ນ

ກຳໄລຂັ້ນພື້ນຖານຕໍ່ຮຸ້ນ (“EPS”) ແມ່ນຄິດໄລ່ເງິນປັນຜົນຂອງກຳໄລພາຍໃນປີຫານໃຫ້ຈຳນວນຜູ້ຖືຮຸ້ນສາມັນຂອງບໍລິສັດ ແມ່ດ້ວຍການເອົາຈຳນວນສະເລ່ຍຈຳນວນຮຸ້ນສາມັນທັ້ງໝົດພາຍໃນປີ.

4. ເງິນສົດ

	30 ກັນຍາ2025	*30 ກັນຍາ 2024*
	ກີບ	*ກີບ*
ເງິນສົດ	42,486,000	-
ເງິນຝາກຢູ່ທະນາຄານ ແຫ່ງ ສປປ ລາວ	1,000,000	1,000,000
ເງິນຝາກຢູ່ກະຊວງການເງິນ	116,375,378	-
ເງິນຝາກຢູ່ທະນາຄານ	55,713,246,768	5,788,133,108
ໃນນັ້ນ:		
- *ເງິນສົດຂອງບໍລິສັດ*	*32,161,885,645*	*1,591,743,476*
- *ເງິນຝາກຂອງນັກລົງທຶນ (*)*	*8,957,078,365*	*4,196,389,632*
- *ເງິນຝາກພາຍໃຕ້ບັນຊີຈຳໜ່າຍຮຸ່ນສາມັນ (**)*	*14,444,945,500*	-
- *ເງິນຝາກສຳລັບລາຍຮັບ-ລາຍຈ່າຍພັນຖະບັດລັດຖະບານ ຮ່ວມກັບ 2 ບໍລິສັດຫຼັກຊັບ*	*149,337,258*	-
	55,873,108,146	**5,789,133,108**

(*) ບໍລິສັດໄດ້ຮັບຮູ້ຈຳນວນເງິນດັ່ງກ່າວ ເປັນເງິນຝາກຂອງນັກລົງທຶນສຳລັບການຊື້ຂາຍຫຼັກຊັບໃນບົດອະທິບາຍຊ້ອນທ້າຍ ເລກທີ 16 ຂອງເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025 ສຳລັບຈຸດປະສົງພິເສດ.

(**) ອີງຕາມລະບຽບໃນການອອກຈຳໜ່າຍຮຸ່ນເລກທີ 13/ຄຄຊ ລົງວັນທີ 11 ທັນວາ 2024 ບໍລິສັດຈຳເປັນຕ້ອງຝາກເງິນທັງໝົດຈາກການຈຳໜ່າຍຮຸ່ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດໄວ້ໃນທະນາຄານທຸລະກິດໃນປະເທດລາວ. ການເຂົ້າເຖິງທຸລະກຳຂອງບໍລິສັດຈະຖືກຈຳກັດໂດຍສຳນັກງານຄະນະກຳມະການຫຼັກຊັບລາວ (ຄຄຊ) ເພື່ອປ້ອງກັນການນຳໃຊ້ເງິນຈາກການລະດົມທຶນຈົນກວ່າບໍລິສັດຈະມີແຜນການໃນການຂະຫຍາຍທຸລະກິດ ຫຼື ກິດຈະການຕ່າງໆທີ່ໄດ້ຮັບອະນຸຍາດ.

5. ໜີ້ຕ້ອງຮັບການຄ້າ

	30 ກັນຍາ2025	*30 ກັນຍາ 2024*
	ກີບ	*ກີບ*
ໜີ້ຕ້ອງຮັບຄ່າທີ່ປຶກສາທາງດ້ານການເງິນ	17,928,327,235	17,928,327,235
ໜີ້ຕ້ອງຮັບຄ່າທຳນຽມຄ้ำປะกัน	605,394,684	631,974,181
ໜີ້ຕ້ອງຮັບຄ່າທຳນຽມການເປັນຕົວແທນ	1,386,012,669	1,386,012,669
ໜີ້ຕ້ອງຮັບຄ່ານາຍໜ้า	502,914,210	972,579,980
	20,422,648,798	**20,918,894,065**

6. ການລົງທຶນໃນຫຼັກຊັບ

	30 ກັນຍາ2025	*30 ກັນຍາ 2023*
	ກີບ	*ກີບ*
ຫຼັກຊັບຖືຄອງໄວ້ເພື່ອຄ້າ		
ຕົ້ນທຶນ	28,651,410,771	38,079,575,521
ມູນຄ່າຍຸດຕິທຳທີ່ບໍ່ເກີດຂຶ້ນຈິງສຸດທິ (ຂາດທຶນ)	(4,687,936,021)	(9,658,012,221)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**23,963,474,750**	**28,421,563,300**

7. ເງິນຝາກມີກຳນົດ

	30 ກັນຍາ2025	*30 ກັນຍາ 2023*
	ກີບ	*ກີບ*
ເງິນຝາກມີກຳນົດ		
ເງິນຝາກມີກຳນົດໄລຍະສັ້ນ	15,500,000,000	10,000,000,000
ເງິນຝາກມີກຳນົດໄລຍະຍາວ	-	15,000,000,000
	15,500,000,000	**25,000,000,000**

ລາຍລະອຽດເງິນຝາກມີກຳນົດຂອງບໍລິສັດ ນະວັນທີ 30 ກັນຍາ2025 ມີດັ່ງລຸ່ມນີ້:

	ຕົ້ນທຶນ			*ອັດຕາດອກເບ້ຍ*
	ກີບ	*ໄລຍະເວລາ*	*ວັນຄົບກຳນົດ*	*(% ຕໍ່ປີ)*
ທະນາຄານ ຮ່ວມທຸລະກິດ ລາວ - ຫວຽດ ຈຳກັດ	15,000,000,000	24 ເດືອນ	03 ເມສາ 2026	6.32
ທະນາຄານ ຮ່ວມພັດທະນາ	500,000,000	12 ເດືອນ	21 ມີນາ 2026	10.25
	15,500,000,000			

8. ຊັບສິນໝຸນວຽນອື່ນໆ

	30 ກັນຍາ2025	*30 ກັນຍາ 2023*
	ກີບ	*ກີບ*
ຈ່າຍລ່ວງໜ້າຄ່າເຊົ່າ	609,913,755	780,390,981
ຈ່າຍລ່ວງໜ້າປະກັນໄພ	11,122,543	97,973,409
ກອງທຶນຮ່ວມເພື່ອຊຳລະທິດແທນຄວາມສ່ຽງຫຼັກຊັບ	140,289,384	136,817,050
ອື່ນໆ	351,892,770	129,970,300
	1,113,218,452	**1,145,151,740**

9. ຊັບສິນບັດຄົງທີ່ມີຕົວຕົນ

	ການປັບປຸງ ແລະ ການຕົບແຕ່ງ ກີບ	*ເຄື່ອງໃຊ້ຫ້ອງການ ແລະ ເຟີນີເຈີ ກີບ*	*ພາຫະນະ ກີບ*	*ລວມ ກີບ*
ຕົ້ນທຶນ				
ນະວັນທີ 1 ມັງກອນ 2025	3,025,263,669	4,447,531,448	1,256,389,000	8,729,184,117
ເພີ່ມຂຶ້ນພາຍໃນປີ	131,888,900	-	-	131,888,900
ສະສາງພາຍໃນປີ	(588,042,403)	(1,823,167,305)	-	(2,411,209,708)
ນະວັນທີ 30 ກັນຍາ2025	2,569,110,166	2,624,364,143	1,256,389,000	6,449,863,309
ຄ່າຫຼ້ຍຫ້ຽນສະສົມ				
ນະວັນທີ 1 ມັງກອນ 2025	1,067,175,316	4,064,487,438	1,256,389,000	6,388,051,754
ຄ່າຫຼ້ຍຫ້ຽນພາຍໃນປີ	51,134,081	120,592,289	-	171,726,370
ສະສາງພາຍໃນປີ	(588,042,403)	(1,823,167,305)	-	(2,411,209,708)
ນະວັນທີ 30 ກັນຍາ2025	530,266,994	2,361,912,422	1,256,389,000	4,148,568,416
ມູນຄ່າຍັງເຫຼືອຕາມບັນຊີສຸດທິ				
ນະວັນທີ 1 ມັງກອນ 2025	1,958,088,353	383,044,010	-	2,341,132,363
ນະວັນທີ 30 ກັນຍາ2025	2,038,843,172	262,451,721	-	2,301,294,893

10. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

	ຊ້ອບແວ ກີບ
ຕົ້ນທຶນ	
ນະວັນທີ 1 ມັງກອນ 2025	392,024,300
ເພີ່ມຂຶ້ນພາຍໃນປີ	-
ສະສາງພາຍໃນປີ	-
ນະວັນທີ 30 ກັນຍາ2025	392,024,300
ຄ່າຫຼ້ຍຫ້ຽນສະສົມ	
ນະວັນທີ 1 ມັງກອນ 2025	389,430,503
ຄ່າຫຼ້ຍຫ້ຽນພາຍໃນປີ	424,482
ນະວັນທີ 30 ກັນຍາ2025	389,854,985

ມູນຄ່າຍັງເຫຼືອຕາມບັນຊີສຸດທິ	
ນະວັນທີ 1 ມັງກອນ 2025	2,593,797
ນະວັນທີ 30 ກັນຍາ2025	2,169,315

11. ຊັບສິນກຳລັງກໍ່ສ້າງ

	30 ກັນຍາ2025	*30 ກັນຍາ 2024*
	ກີບ	*ກີບ*
ລະບົບຊື້-ຂາຍຫຼັກຊັບ	148,482,048	-
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**148,482,048**	**-**

12. ການລົງທຶນຫຼັກຊັບຖືຄອງໄວ້ເພື່ອຂາຍ

	30 ກັນຍາ2025	*30 ກັນຍາ 2024*
	ກີບ	*ກີບ*
ຮຸ້ນອອກໂດຍ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ		
ຕົ້ນທຶນ (*)	53,294,070,000	51,622,155,000
ມູນຄ່າຍຸດຕິທຳທີ່ບໍ່ເກີດຂຶ້ນຈິງສຸດທິກຳໄລ	11,936,406,000	11,938,485,000
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**65,230,476,000**	**63,560,640,000**

(*) ມູນຄ່າ 53,294,070,000 ນະວັນທີ 30 ກັນຍາ2025 ປະກອບມີ:

(i) ຈຳນວນຮຸ້ນທີ່ຍັງບໍ່ໄດ້ຂາຍ 24,989,200 ຮຸ້ນທີ່ອອກຈຳໜ່າຍຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນໂດຍທີ່ ບໍລິສັດຈະຊື້ຮຸ້ນສ່ວນໜຶ່ງອີງຕາມຂໍ້ຕົກລົງການບໍລິການຄ້ຳປະກັນສຳລັບ IPO. ການຊື້ຮຸ້ນນັ້ນແມ່ນໄດ້ຮັບການສະໜັບສະໜູນທາງການເງິນໂດຍການກູ້ຢືມຈາກ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ – ບໍລິສັດແມ່ ຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ *(ເບິ່ງອະທິບາຍເລກທີ 14).* ໃນວັນທີ 30 ກັນຍາ2025, ມູນຄ່າຂອງຮຸ້ນທັງໝົດແມ່ນ 26,246,727,190. ໃນໄລຍະ 6 ເດືອນບໍລິສັດໄດ້ຂາຍຮຸ້ນ 8,500 ຮຸ້ນ ມູນຄ່າ 8,067,190 ກີບ ຫຼັງຈາກຫັກຄ່າທຳນຽມ. ອີງຕາມສັນຍາເລກທີ 003/ບລຈ ລົງວັນທີ 20 ພຶດສະພາ 2019 ມາດຕາທີ 3 ໃນກໍລະນີໄດ້ຮັບເງິນຈາກການຂາຍຮຸ້ນຫຼັງຈາກ 6 ເດືອນຈະຕ້ອງໂອນເງິນດັ່ງກ່າວໃຫ້ກັບບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ ເວັ້ນເສຍແຕ່ວ່າເງິນຈາການຈຳໜ່າຍຮຸ່ນມີ ມູນຄ່າ 400,000,000 ກີບຂຶ້ນໄປ ບໍລິສັດຈະຕ້ອງໂອນເງິນດັ່ງກ່າວຄືນພາຍໃນ 10 ມື້

(ii) ຈຳນວນຮຸ້ນ 24,755,100 ຮຸ້ນທີ່ບັນທຶກໃນບັນຊີມູນຄ່າຫຼັກຊັບຖືຄອງໄວ້ເພື່ອຂາຍ.ໃນວັນທີ 30 ກັນຍາ2025, ມູນຄ່າຂອງຮຸ້ນທັງໝົດແມ່ນ 27,055,410,000 ກີບ.

13. ການລົງທຶນຫຼັກຊັບຖືຄອງໄວ້ຈົນຄົບກຳນົດ

	30 ກັນຍາ2025	*30 ກັນຍາ 2024*
	ກີບ	*ກີບ*
ການລົງທຶນໄລຍະສັ້ນ		
ພັນທະບັດລັດຖະບານອອກໂດຍກະຊວງການເງິນ	1,517,390,000	2,273,336,000
	1,517,390,000	**2,273,336,000**
ການລົງທຶນໄລຍະຍາວ		
ພັນທະບັດລັດຖະບານອອກໂດຍກະຊວງການເງິນ	12,966,359,000	12,690,537,400
	12,966,359,000	**12,690,537,400**

ລາຍລະອຽດຂອງພັນທະບັດລັດຖະບານອອກໂດຍກະຊວງການເງິນ ນະວັນທີ 30 ກັນຍາ2025 ມີດັ່ງລຸ່ມນີ້:

	ຕົ້ນທຶນ					
	ສະກຸນເງິນ	*ໂຄລາ*	*ກີບ*	*ໄລຍະ ເວລາ*	*ວັນຄົບກຳນົດ*	*ອັດຕາດອກເບ້ຍ (% ຕໍ່ປີ)*
ການລົງທຶນໄລຍະສັ້ນ						
LA10012229D8	USD	50,000	1,083,850,000	2 ປີ	12 ກັນຍາ 2025	5.50
LA1001222BD0	USD	20,000	433,540,000	2 ປີ	13 ພະຈິກ 2025	5.50
		ລວມ	**1,517,390,000**			
ການລົງທຶນໄລຍະຍາວ						
LA100122ABB9	USD	23,000	498,571,000	5 ປີ	29 ພະຈິກ 2026	7.00
LA10012239E5	USD	20,000	433,540,000	3 ປີ	05 ກັນຍາ 2027	6.00
LA10012239E5	USD	42,000	910,434,000	3 ປີ	19 ກັນຍາ 2027	6.00
LA10012297E3	USD	180,000	3,901,860,000	3 ປີ	18 ກໍລະກົດ 2027	6.00
LA100112DEB8	THB	4,350,000	2,893,837,500	3 ປີ	21 ພະຈິກ 2027	6.00
LA10011297E4	THB	3,880,000	2,581,170,000	3 ປີ	18 ກໍລະກົດ 2027	6.00
LA10011239E6	THB	2,626,000	1,746,946,500	3 ປີ	05 ກັນຍາ 2027	6.00
		ລວມ	**12,966,359,000**			

14. ເງິນກູ້ຍືມໄລຍະສັ້ນ

	30 ກັນຍາ2025	*30 ກັນຍາ 2024*
	ກີບ	*ກີບ*
ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງ ຈັນຕອນເໜືອ ຈຳກັດ	26,246,727,190	26,248,421,223
	26,246,727,190	**26,248,421,223**

ການກູ້ຍືມທີ່ມີດອກເບ້ຍແມ່ນ ໃນຮູບແບບສະໜັບສະໜຸນເງິນທຶນໃຫ້ແກ່ການຊື້ຮຸ້ນຕາມທີ່ໄດ້ເປີດເຜີຍໃນບົດອະທິບາຍເລກທີ 12, ໂດຍມີການຊຳລະສະສາງອີງໃສ່ຈຳນວນຮຸ້ນທີ່ໄດ້ຂາຍ. ເງິນປັນຜົນທີ່ໄດ້ຈາກການຖືຄອງຮຸ້ນ ແລະ ກຳໄລ/ຂາດທຶນຂອງການຂາຍຮຸ້ນຈະຖືເປັນການຈ່າຍດອກເບ້ຍໃຫ້ແກ່ຜູ້ໃຫ້ກູ້ຍືມ.

15. ລາຍຮັບລໍຖ້າສະສາງ

	30 ກັນຍາ2025	*30 ກັນຍາ 2024*
	ກີບ	*ກີບ*
ລາຍຮັບລໍຖ້າສະສາງຈາກການຂາຍຮຸ້ນ (*)	8,635,769,765	8,635,769,765
	8,635,769,765	**8,635,769,765**

(*) ໃນວັນທີ 2 ສິງຫາ 2024, ບໍລິສັດໄດ້ເຊັນສັນຍາກັບບໍລິສັດ Hengshi Chengrui Holding Yunnan Company Limited ສຳລັບການຂາຍຮຸ້ນໃນກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ. ທຸລະກຳດັ່ງກ່າວລວມມີຮຸ້ນ 6,347,700 ຮຸ້ນ, ມູນຄ່າ 8,635,769,765 ກີບ. ເພື່ອປະຕິບັດຕາມຂໍ້ກຳນົດອີງຕາມລະບຽບການທີ່ກຳນົດໄວ້ ແລະ ອຳນວຍຄວາມສະດວກໃຫ້ແກ່ການສຳເລັດການໂອນຮຸ້ນ, ບໍລິສັດ Hengshi Chengrui Holding Yunnan Company Limited ຈຳເປັນຕ້ອງສະໜອງເອກະສານການລົງທຶນຕ່າງປະເທດທີ່ຈຳເປັນພາຍໃນ 2025.

16. ໜີ້ຕ້ອງສົ່ງໃຫ້ແກ່ລູກຄ້າ

	30 ກັນຍາ2025	*30 ກັນຍາ 2024*
	ກີບ	*ກີບ*
ບັນຊີຊຳລະສະສາງຂອງລູກຄ້າ - ຄ່ານາຍໜ້າ	8,957,078,365	4,196,389,632
	8,957,078,365	**4,196,389,632**

17. ເງິນປະໂຫຍດຂອງພະນັກງານ

	30 ກັນຍາ2025	*30 ກັນຍາ 2024*
	ກີບ	*ກີບ*
ໂບນັດ ແລະ ກອງທຶນສະຫວັດດີການ (*)	342,357,183	342,357,183
ໜີ້ສິນເງິນເດືອນ	26,134,000	26,408,427
	368,491,183	**368,765,610**

(*) ໂບນັດ ແລະ ກອງທຶນສະຫວັດດີການ ແມ່ນອີງຕາມມະຕິຕົກລົງຂອງກອງປະຊຸມຄະນະບໍລິຫານປະຈຳປີ 2018 ລົງວັນທີ 16 ພຶດສະພາ 2019. ການຫັກຄັງສຳຮອງ ແລະ ການນຳໃຊ້ຄັງສຳຮອງດັ່ງກ່າວໃຫ້ເໝາະສົມ ຈະຕ້ອງອີງໃສ່ການຕັດສິນໃຈຂອງຄະນະບໍລິຫານ ແລະ ການອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ.

18. ທຶນຈົດທະບຽນທີ່ຖອກແລ້ວ

	30 ກັນຍາ2025		*30 ກັນຍາ 2024*	
ຜູ້ຖືຮຸ້ນ	*% ຄວາມ ເປັນຂອງເຈົ້າ*	*ກີບ*	*% ຄວາມ ເປັນຂອງເຈົ້າ*	*ກີບ*
ທະນາຄານ ສົ່ງເສີມກະສິກຳ	36.90%	41,000,000,000	41.00%	41,000,000,000
ບໍລິສັດ ລາວອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ	18.00%	39,000,000,000	20.00%	20,000,000,000
ບໍລິສັດຫຼັກຊັບ ຮຸ້ນສ່ວນປາຊີຟິກ ຈຳກັດ	35.10%	20,000,000,000	39.00%	39,000,000,000
ຜູ້ລົງທຶນທົ່ວໄປ	10.00%	11,111,120,000	-	-
	100%	**111,111,120,000**	**100%**	**100,000,000,000**

18.1 ຮຸ້ນສາມັນ

	30 ກັນຍາ2025	
	ຈຳນວນຮຸ້ນສາມັນ	*ມູນຄ່າ (ກີບ)*
ຮຸ້ນທີ່ໄດ້ຮັບອະນຸມັດ		
ຮຸ້ນທີ່ໄດ້ອອກ ແລະ ຖອກແລ້ວ		
ຮຸ້ນສາມັນ	1,111,111,200	111,111,120,000
ຍອດເຫຼືອທ້າຍປີ	**1,111,111,200**	**111,111,120,000**

ໃນວັນທີ 17 ມີນາ 2025, ບໍລິສັດໄດ້ຮັບໃບອະນຸຍາດອອກຈຳໜ່າຍຮຸ້ນ (IPO) ອອກໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ. ຕາມທີ່ບໍລິສັດໄດ້ດຳເນີນການອອກຈຳໜ່າຍຮຸ້ນສາມັນໃຫ້ແກ່ມວນຊົນຄັ້ງທຳອິດສຳເລັດໂດຍມີຮຸ້ນຈຳນວນ 11,111,200 ຮຸ້ນ ໃນມູນຄ່າໜ້າບັດ 100 ກີບຕໍ່ຮຸ້ນ ແລະ ລາຄາຂາຍ 130 ກີບ/ຮຸ້ນ ທີ່ໄດ້ອອກຈຳໜ່າຍ.

18.2 ສ່ວນເພີ່ມມູນຄ່າຮຸ້ນ

ສ່ວນເພີ່ມມູນຄ່າຮຸ້ນເກີດຈາກການອອກຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຈຳນວນ 2,360,038,519 ກີບ, ແມ່ນສ່ວນຕ່າງລະຫວ່າງລາຄາຈຳໜ່າຍ (11,111,120,000 ກີບ) ແລະ ມູນຄ່າໜ້າບັດຂອງຮຸ້ນ (14,444,456,000 ກີບ) ຫຼັງຈາກຫັກຕົ້ນທຶນໃນການອອກຮຸ້ນ (973,297,481 ກີບ).

19. ກຳໄລຂັ້ນພື້ນຖານຕໍ່ຮຸ້ນ

ພື້ນຖານຄິດໄລ່ກຳໄລຕໍ່ຮຸ້ນ ("EPS") ແມ່ນຄິດໄລ່ກຳໄລພາຍໃນປີຫານໃຫ້ຈຳນວນຜູ້ສາມັນຂອງບໍລິສັດ ດ້ວຍການເອົາ ຈຳນວນສະເລ່ຍຈຳນວນ ຮຸ້ນສາມັນທັງໝົດພາຍໃນປີ.

ຕາຕະລາງຕໍ່ໄປນີ້ສະແດງລາຍຮັບ ແລະ ຂໍ້ມູນຂອງຮຸ້ນທີ່ໃຊ້ເຂົ້າໃນການຄິດໄລ່ກຳໄລຕໍ່ຮຸ້ນ:

	ສຳລັບໄລຍະຫົກເດືອນຕົ້ນ ປີທີ່ສິ້ນສຸດວັນທີ 30 ກັນຍາ2025	ສຳລັບໄລຍະຫົກເດືອນຕົ້ນ ປີທີ່ສິ້ນສຸດວັນທີ 30 ກັນຍາ2024
	ກີບ	*ກີບ*
ກຳໄລທີ່ເປັນໃຫ້ສ່ວນຂອງຜູ້ຖືຮຸ້ນສາມັນຂອງບໍລິສັດ	15,899,229,943	1,579,001,821
ຈຳນວນຮຸ້ນສາມັນສະເລ່ຍທັງໝົດ	1,111,111,200	1,000,000,000
ກຳໄລຕໍ່ຮຸ້ນ	14.31	1.58

20. ລາຍຮັບຄ່ານາຍໜ້າ ແລະ ຄ່າທຳນຽມສຸດທິ

	ສຳລັບໄລຍະຫົກເດືອນຕົ້ນ ປີທີ່ສິ້ນສຸດວັນທີ 30 ກັນຍາ 2025	ສຳລັບໄລຍະຫົກເດືອນຕົ້ນ ປີທີ່ສິ້ນສຸດວັນທີ 30 ກັນຍາ 2024
	ກີບ	*ກີບ*
ລາຍຮັບ		
ຄ່ານາຍໜ້າຊື້-ຂາຍ ຫຼັກຊັບ	27,291,429	4,032,714
ຄ່າທີ່ປຶກສາທາງດ້ານການເງິນ	4,831,706,771	1,385,558,314
ຄ່າທຳນຽມເປັນຕົວແທນການຂາຍ	3,113,950,192	2,497,527,714
	7,972,948,392	**3,887,118,742**
ລາຍຈ່າຍ		
ຄ່າທີ່ປຶກສາທາງດ້ານການເງິນ	(724,980,000)	(10,414,500)
ຄ່າທຳນຽມເປັນຕົວແທນການຂາຍຫຼັກຊັບ	-	(127,401,600)
ຄ່າທຳນຽມຜູ້ຈຳໜ່າຍ	(136,666,339)	(276,949,143)
ຄ່ານາຍອື່ນໆຈາກການຂາຍຫຼັກຊັບ	(36,478,840)	-
	(898,125,179)	**(414,765,243)**
ລາຍຮັບຄ່ານາຍໜ້າ ແລະ ຄ່າທຳນຽມ, ສຸດທິ	**7,074,823,213**	**3,472,353,499**

21. ລາຍຈ່າຍອື່ນໆໃນການດຳເນີນງານ

	ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ກັນຍາ 2025	ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ກັນຍາ2024
	ກີບ	*ກີບ*
ຄ່າເຊົ່າ	400,578,077	1,316,026,426
ການບໍລິການຈາກພາຍນອກ	51,067,825	50,490,675
ລາຍຈ່າຍສຳລັບການບັນເທີງທາງດ້ານທຸລະກິດ	70,300,780	34,081,500
ຄ່າໃຊ້ຈ່າຍໃນການເດີນທາງ	360,909,379	65,514,000
ຄ່າໃຊ້ຈ່າຍສຳລັບສາທາລະນຸປະໂພກ	38,104,000	44,924,593
ຄ່າໃຊ້ຈ່າຍປະກັນໄພ	99,036,866	85,710,569
ຄ່າໄປສະນີ ແລະ ໂທລະຄົມມະນາຄົມ	20,735,581	13,380,523
ຄ່າໃຊ້ຈ່າຍການປະຊຸມ ແລະ ສຳມະນາ	249,118,000	4,000,000
ອາກອນ ແລະ ພັນທະອື່ນໆ	3,540,000	1,545,000
ຂາດທຶນອັດຕາແລກປ່ຽນ	142,448,194	10,147,857
ອື່ນໆ	231,826,842	164,903,453
	1,667,665,544	**1,790,724,596**

22. ອາກອນກຳໄລ

ການຄິດໄລ່ເງິນແຮສຳລັບອາກອນກຳໄລພາຍໃນປີ ແມ່ນອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນທີ່ນຳໃຊ້ໃນ ສປປ ລາວ. ບໍລິສັດມີພັນທະຕ້ອງເສຍອາກອນກຳໄລໃນອັດຕາ 20% ຂອງກຳໄລກ່ອນຫັກອາກອນ ໂດຍອີງຕາມກົດໝາຍສ່ວຍສາອາກອນສະບັບປັບປຸງໃໝ່ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນສັກສິດນຳໃຊ້ໃນວັນທີ ຫຼື ຫຼັງວັນທີ 1 ມັງກອນ 2020.

ເນື່ອງຈາກບໍລິສັດໄດ້ຍ້າຍສະຖານທີ່ຕັ້ງໄປ ເຂດເສດຖະກິດພິເສດບຶງທາດຫຼວງ, ຈຶ່ງໄດ້ຮັບການຍົກເວັ້ນອາກອນລາຍໄດ້ຈາກການດຳເນີນງານເປັນໄລຍະ 2 ປີ ເລີ່ມຈາກວັນທີອອກໃບຢັ້ງຢືນການຈົດທະບຽນວິສາຫະກິດເລກທີ No. 0631 ລົງວັນທີ 25 ມິຖຸນາ 2024.

ລາຍລະອຽດການຫັກເງິນແຮອາກອນກຳໄລ (“ອກລ”) ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ກັນຍາ2025 ດັ່ງລຸ່ມນີ້:

22. ອາກອນກຳໄລ (ຕໍ່)

	ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ກັນຍາ 2025	ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ກັນຍາ2024
	ກີບ	*ກີບ*
ກຳໄລກ່ອນອາກອນພາຍໃນປີ	**15,899,229,943**	**1,579,001,821**
ຫັກ:		
ລາຍການທີ່ບໍ່ໃຫ້ຖືເປັນລາຍຮັບ	*(6,912,552,897)*	*(1,783,782,610)*
ລາຍຮັບທີ່ຖືກຍົກເວັ້ນຈາກອາກອນກຳໄລ	*(6,981,886,366)*	*(1,367,442,550)*
ເພີ່ມ:		
ລາຍການທີ່ບໍ່ໃຫ້ຖືເປັນລາຍຈ່າຍ	*1,664,487,831*	*1,790,747,547*
	3,669,278,511	**218,524,208**
ອາກອນຍົກຍອດໄປຫັກຕໍ່	(1,271,090,653)	(218,524,208)
ຄາດຄະເນອາກອນກຳໄລ/(ຂາດທຶນ)ໃນປີ	**2,398,187,858**	-
ຄາດຄະເນລາຍຈ່າຍອາກອນກຳໄລພາຍໃນປີໃນອັດຕາ 20% (2025: 20%)	-	-
ອາກອນກຳໄລຕ້ອງມອບໃນຕົ້ນປີ	-	-
ອາກອນກຳໄລໄດ້ຊຳລະພາຍໃນປີ	-	-
ອາກອນກຳໄລທີ່ຕ້ອງມອບທ້າຍປີ	**-**	**-**

ການແຈ້ງອາກອນຂອງບໍລິສັດຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນ ແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025 ສຳລັບຈຸດປະສົງພິເສດອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

ອາກອນຍົກຍອດໄປຫັກຕໍ່

ພາຍໃຕ້ກົດໝາຍສ່ວຍສາອາກອນປັດຈຸບັນເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019, ເຊິ່ງມີຜົນນຳໃຊ້ໃນວັນທີ 1 ມັງກອນ 2020, ບໍລິສັດສາມາດນຳໃຊ້ອາກອນຍົກຍອດໄປຫັກຕໍ່ ເພື່ອຫັກອອກຈາກອາກອນກຳໄລພາຍໃນ 5 ປີ ນັບຈາກປີທີ່ມີການຂາດທຶນ. ພາຍຫຼັງຄົບຕາມປີທີ່ກຳນົດ, ອາກອນຍົກຍອດໄປຫັກຕໍ່ຈະບໍ່ຖືກຫັກອອກຈາກກຳໄລ. ລາຍລະອຽດຂອງມູນຄ່າອາກອນທີ່ຍົກຍອດໄປຫັກຕໍ່ນະວັນທີ 30 ກັນຍາ2025 ມີດັ່ງນີ້:

22. ອາກອນກຳໄລ (ຕໍ່)

ປີ	*ຂາດທຶນປີຜ່ານມາສາມາດຍົກຍອດໄປຫັກຕໍ່ ກີບ*	*ຂາດທຶນທາງອາກອນທີ່ເກີດຂຶ້ນ ກີບ*	*ນຳໃຊ້ພາຍໃນປີ ກີບ*	*ນຳໃຊ້ນະວັນທີ່ອອກບົດລາຍງານ ກີບ*
2020	2025	(4,991,141,258)	-	(4,991,141,258)
2021	2026	(4,582,326,343)	-	(9,573,467,601)
2022	2027	-	4,639,193,634	(4,934,273,967)
2023	2028	-	304,871,009	(4,629,402,958)
2024	2029	-	3,358,312,305	(1,271,090,653)
2025	2030	-	1,271,090,653	-
		(9,573,467,601)	**9,573,467,601**	**-**

23. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍລະອຽດລາຍການເຄື່ອນໄຫວສຳຄັນກັບພາກສ່ວນທີ່ກ່ຽວຂ້ອງພາຍໃນປີດັ່ງລຸ່ມນີ້:

ພາກສ່ວນກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*30 ກັນຍາ2025*	*30 ກັນຍາ 2024*
ທະນາຄານສົ່ງເສີມກະສິກຳ	ເຈົ້າຂອງ	ເງິນຝາກກະແສລາຍວັນ	7,786,968	7,525,992
	ເຈົ້າຂອງ	ເງິນຝາກປະຢັດ	1,328,252,583	393,791,338
			1,336,039,551	**401,317,330**

24. ເຫດການທີ່ເກີດຂຶ້ນພາຍຫຼັງວັນທີຂອງໃບລາຍງານຖານະການເງິນ

ບໍ່ມີບັນຫາ ຫຼື ເຫດການໃດທີ່ໄດ້ເກີດຂຶ້ນຕັ້ງແຕ່ວັນທີ 30 ກັນຍາ2025 ທີ່ສົ່ງຜົນກະທົບເຮັດໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025 ສຳລັບຈຸດປະສົງພິເສດຂອງບໍລິສັດ.

ກະກຽມໂດຍ:

ທ່ານ ນາງ ອຸເພັດ ຫລວງລາດ
ຫົວໜ້າບັນຊີ

ອະນຸມັດໂດຍ:

ທ່ານ ລິນ ລີ
ຜູ້ອຳນວຍການໃຫຍ່

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນປະຈຳໄຕມາດ III ປີ 2025 (ຕໍ່)
ນະວັນທີ 30 ມິຖຸນາ 2025 ແລະ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ

ນະຄອນຫຼວງວຽງຈັນ, ສປປ ລາວ

30 ກັນຍາ 2025